ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ແຂວງຫຼວງນໍ້າທາ

ເລກທີ..09../ຈຂ

ທີ່ ຫຼວງນໍ້າທາ, ວັນທີ04../11./2015

**ຄໍາສັ່ງເພີ່ມເຕີມ**

**ຂອງເຈົ້າແຂວງ**

**ວ່າດ້ວຍການຫ້າມປູກກ້ວຍຢູ່ແຂວງຫຼວງນໍ້າທາ.**

**ເຖິງ:** ທົ່ວໜ້າພະແນກການ, 2 ກອງບັນຊາການ, ອົງການທຽບເທົ່າ ແລະ ເຈົ້າເມືອງ 5 ເມືອງ.

- **ອີງຕາມ:** ແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບເລກທີ 830/ຫລບ.ກສສ, ລົງວັນທີ 24/6/2014.
- **ອີງຕາມ:** ຄໍາສັ່ງຂອງເຈົ້າແຂວງວ່າດ້ວຍການຫ້າມປູກກ້ວຍໃສ່ດິນນາ ສະບັບເລກທີ 04/ຈຂ, ລົງວັນທີ 10/07/2014.
- **ອີງຕາມ:** ຄໍາສັ່ງຂອງຫ້ອງການກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກ ທີ 1234/ຫກ, ລົງວັນທີ 26/06/2015.
- **ອີງຕາມ:** ການເຫັນດີເປັນເອກະພາບຂອງບັນດາຜູ້ແທນກອງປະຊຸມ ເປີດກວ້າງຂອງຄະນະບໍລິຫານງານພັກແຂວງຫຼວງນໍ້າທາ ຄັ້ງທີ III ສະໄໝທີ VII, ວັນທີ 20-23/10/2015.

ໃນໄລຍະຜ່ານມາເຫັນວ່າ ການປູກກ້ວຍຂອງນັກທຸລະກິດພາຍໃນ ແລະ ຕ່າງປະເທດຈໍານວນໜຶ່ງ ບໍ່ຖືກຕ້ອງຕາມລະບຽບການ ແລະ ກົດໝາຍ, ມີນັກທຸລະກິດສວຍໂອກາດ ຮ່ວມມືກັບປະຊາຊົນ ແລະ ພະນັກງານຈໍານວນໜຶ່ງ ດໍາເນີນການປູກກ້ວຍໃສ່ດິນນາ ແລະ ດິນທໍາການຜະລິດຂອງປະຊາຊົນ ນໍາໃຊ້ສານເຄມີ, ຢາປາບສັດຕູພືດທີ່ເປັນອັນຕະລາຍຢ່າງຊະຊາຍ ເຮັດໃຫ້ມີຜົນກະທົບຢ່າງຮ້າຍແຮງຕໍ່ເສດຖະກິດ - ສັງຄົມ, ສະພາບແວດລ້ອມ, ຊີວິດຄົນ ແລະ ສັດ ເຊັ່ນ: ເນື້ອທີ່ຜະລິດເຂົ້າຫຼຸດລົງ, ບຸກລຸກປ່າສະຫງວນ, ປ່າຫວງຫ້າມ; ມີການນໍາເຂົ້າ ແລະ ໃຊ້ສານເຄມີທີ່ເປັນອັນຕະລາຍຕໍ່ສຸຂະພາບຂອງປະຊາຊົນ ແລະ ຊີວະນາໆພັນ, ເຮັດໃຫ້ຄຸນນະພາບດິນເຊື່ອມໂຊມ, ມີການລັກລອບນໍາເຂົ້າແຮງງານບໍ່ຖືກຕ້ອງ ເປັນການຝ່າຝືນລະບຽບກົດໝາຍ ແລະ ລະບຽບການບ້ານເມືອງ.

ເພື່ອສືບຕໍ່ຄຸ້ມຄອງທີ່ດິນທຸກປະເພດ, ປົກປັກຮັກສາສິ່ງແວດລ້ອມ ແນ່ໃສ່ພັດທະນາເສດຖະກິດ-ສັງຄົມ ຂອງແຂວງຫລວງນໍ້າທາໃຫ້ມີຄວາມຍືນຍົງ.

## ເຈົ້າແຂວງ ຫຼວງນໍ້າທາ ອອກຄໍາສັ່ງເພີ່ມເຕີມ ດັ່ງນີ້:

1. ຫ້າມທຸກພາກສ່ວນວິສາຫະກິດ, ບໍລິສັດ, ນັກທຸລະກິດພາຍໃນ ແລະ ຕ່າງປະເທດ, ເອກະຊົນ, ບຸກຄົນ, ນິຕິບຸກຄົນ ແລະ ປະຊາຊົນ ດໍາເນີນການປູກກ້ວຍຊະນິດແນວພັນທີ່ນໍາໃຊ້ຝຸ່ນ, ປຸ໋ຍ, ສານເຄມີ, ຢາປາບສັດຕູພືດ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ເປັນອັນຕະລາຍຮ້າຍແຮງຕໍ່ຊີວິດຄົນ ແລະ ສັດ ໃສ່ດິນທຸກປະເພດ ຢູ່ແຂວງຫຼວງນໍ້າທາ ຢ່າງເດັດຂາດ.
2. ຫ້າມອົງການຈັດຕັ້ງລັດ ອອກໃບອະນຸຍາດດໍາເນີນທຸລະກິດປູກກ້ວຍ, ອະນຸຍາດແຜນນໍາເຂົ້າວັດສະດຸ-ອຸປະກອນການຜະລິດ ແລະ ປັດໃຈການຜະລິດທຸກປະເພດ ທີ່ຕິດພັນກັບການປູກກ້ວຍ ໃຫ້ແກ່ທຸກພາກສ່ວນທີ່ໄດ້ລະບຸໄວ້ຢູ່ໃນຂໍ້ 1 ຂອງຄໍາສັ່ງສະບັບນີ້ ຢ່າງເດັດຂາດ.
3. ສໍາລັບສວນກ້ວຍຊະນິດແນວພັນຕາມຂໍ້ 1 ໃນຄໍາສັ່ງສະບັບນີ້ທີ່ໄດ້ປູກ ກ່ອນຄໍາສັ່ງຂອງເຈົ້າແຂວງ ເລກທີ 04/ຈຂ, ລົງວັນທີ 10/07/2014 ຕ້ອງເຮັດສັນຍາ ແລະ ປະກອບເອກະສານ ຄຸ້ມຄອງສິ່ງແວດລ້ອມ, ທະບຽນທຸລະກິດ ແລະ ເອກະສານອື່ນໆ ນໍາຂະແໜງການກ່ຽວຂ້ອງຂອງແຂວງ ແລະ ເມືອງພ້ອມທັງວາງເງິນຄໍ້າປະກັນຕາມຄໍາສັ່ງສະບັບດັ່ງກ່າວ ໃຫ້ສໍາເລັດ ກ່ອນວັນທີ 1/1/2016 ແລະ ສືບຕໍ່ບົວລະບັດຮັກສາ, ເກັບກູ້ຜົນຜະລິດ ຮອດປີ 2017 ແລ້ວລົບລ້າງກິດຈະການທັງໝົດຢ່າງສິ້ນເຊີງ ພ້ອມທັງລົບກິດຈະການປູກກ້ວຍອອກຈາກໃບທະບຽນວິສາຫະກິດໂດຍບໍ່ມີເງື່ອນໄຂຢ່າງເດັດຂາດ.
4. ທຸກກິດຈະການປູກກ້ວຍ ຫຼັງຄໍາສັ່ງຂອງເຈົ້າແຂວງ ເລກທີ 04/ຈຂ, ລົງວັນທີ 10/07/2014 ຖືວ່າເປັນການລະເມີດ ແລະ ຖືກລົບລ້າງຢ່າງສິ້ນເຊີງ ມອບໃຫ້ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງເມືອງດໍາເນີນ ການແກ້ໄຂເດັດຂາດຕາມກົດໝາຍ.
5. ທຸກພາກສ່ວນວິສາຫະກິດ, ບໍລິສັດ, ນັກທຸລະກິດພາຍໃນ ແລະ ຕ່າງປະເທດ, ເອກະຊົນ, ບຸກຄົນ, ນິຕິບຸກຄົນ ແລະ ປະຊາຊົນ ລວມທັງອົງການຈັດຕັ້ງລັດ, ພະນັກງານ, ທະຫານ, ຕໍາຫລວດ ທີ່ລະເມີດຕໍ່ຄໍາສັ່ງສະບັບນີ້ ຈະຖືກຍຶດວັດສະດຸ-ອຸປະກອນການຜະລິດ ແລະ ປັດໄຈການຜະລິດທຸກປະເພດ ທີ່ຕິດພັນກັບການປູກກ້ວຍ ແລະ ຖອນເອກະສານການລົງທຶນທັງໝົດ ພ້ອມທັງດໍາເນີນມາດຕາການປັບໃໝ ແລະ ດໍາເນີນຄະດີຕາມລະບຽບກົດໝາຍ.
   - ສໍາລັບອົງການຈັດຕັ້ງລັດ, ພະນັກງານ, ທະຫານ, ຕໍາຫຼວດ ທີ່ລະເມີດຄໍາສັ່ງສະບັບນີ້ຈະຖືກຕັກເຕືອນ ແລະ ປະຕິບັດວິໄນ ຕາມດໍາລັດ ເລກທີ 82/ນຍ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.
6. ບັນດາພະແນກການທີ່ກ່ຽວຂ້ອງ, ສອງກອງບັນຊາການ, ອົງການທຽບເທົ່າ, ບັນດາເມືອງ, ອົງການປົກຄອງບ້ານ, ປະຊາຊົນ, ນັກທຸລະກິດພາຍໃນ ແລະ ຕ່າງປະເທດ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ຢ່າງເຂັ້ມງວດ.

7. ມອບໃຫ້ຫົວໜ້າພະແນກການ, ສອງກອງບັນຊາການ, ອົງການທຽບເທົ່າ ແລະ ເຈົ້າເມືອງ ນຳເອົາຄຳສັ່ງສະບັບນີ້ ລົງເຜີຍແຜ່ໃຫ້ພະນັກງານ, ລັດຖະກອນ, ອົງການປົກຄອງບ້ານ, ປະຊາຊົນ ແລະ ນັກທຸລະກິດພາຍໃນ ແລະ ຕ່າງປະເທດ ທີ່ຢູ່ໃນຂອບເຂດການຄຸ້ມຄອງຂອງຕົນ ຮັບຮູ້, ເຂົ້າໃຈ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ.
8. ຄຳສັ່ງສະບັບນີ້ ເພີ່ມເຕີມໃສ່ຄຳສັ່ງຂອງເຈົ້າແຂວງ ສະບັບເລກທີ 04/ຈຂ, ລົງວັນທີ 10 ກໍລະກົດ 2014 ແລະ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

**ເຈົ້າແຂວງໆ ຫຼວງນ້ຳທາ**

ເພັດຖາວອນ ພິລະວັນ